ບໍລິສັດ ດັກລັກ ຣັບເບີ ຈຳກັດ

**(DAKLAORUCO)**

# ຕາຕະລາງຄວາມສ່ຽງ ແລະ ມາດຕາການຄວບຄຸມໃນກິດຈະກຳການຄຸ້ມຄອງປ່າໄມ້

| ລດ | ກິດຈະກຳ/ຂອບເຂດ | ລາຍລະອຽດຄວາມສ່ຽງ | ເຫດຜົນ | ລະດັບ ຄວາມສ່ຽງ | ມາດຕະການຄວບຄຸມ | ຜູ້ຮັບຜິດຊອບ |
|---|---|---|---|---|---|---|
| I | ປົວລະບັດສວນ | | | | | |
| 1 | ການສີດຢາປາບສັດຕູພືດ, ປ້ອງກັນສັດຕູພືດ ແລະ ພະຍາດ | - ຢາອາດຈະປົວເຂົ້າຕາ ຫຼື ສຳພັດກັບຜິວໜັງ ແລະ ລະບົບ ຫາຍໃຈຂອງຄົນ.<br>- ປະຊາຊົນເຂົ້າໄປໃນພື້ນທີ່ທີ່ມີການສີດຢາປາບສັດຕູພືດ | - ຍ້ອນສີດຢາໃນເວລາທີ່ມີລົມ ຫຼື ບໍ່ມີອຸປະກອນປ້ອງກັນແຮງງານ<br>- ທາງບໍລິສັດ/ນິຄົມ ຂາດການແຈ້ງໃຫ້ຊຸມຊົນອ້ອມຂ້າງຮັບຊາບ, ບໍ່ຕັ້ງປ້າຍເຕືອນໃນເຂດທີ່ກຳລັງສີດຢາປາບສັດຕູພືດ | | - ຝຶກອົບຮົມກ່ຽວກັບຄວາມປອດໄພແຮງງານ ແລະ ວິທີປະຖົມພະຍາບານໃນກໍລະນີເກີດເຫດ ແລະ ນຳສິ່ງໂຮງໝໍເພື່ອປິ່ນປົວ.<br>- ສະໜອງອຸປະກອນປ້ອງກັນແຮງງານຢ່າງຄົບຖ້ວນຕາມກົດລະບຽບ FSC.<br>- ປະຕິບັດຕາມຫຼັກການ 4 ຖືກ ແລະ ຫ້າມສີດຢາໃນເວລາທີ່ມີລົມແຮງ.<br>- ແຈ້ງໃຫ້ຊຸມຊົນອ້ອມຂ້າງບໍລິເວນທີ່ມີການສີດຢາປາບສັດຕູພືດຮັບຊາບ, ຕັ້ງປ້າຍເຕືອນໃນເຂດທີ່ບໍລິສັດກຳລັງສີດຢາປາບສັດຕູພືດ ເພື່ອໃຫ້ຄົນຜ່ານໄປມາໄດ້ຮັບຮູ້ ແລະ ບໍ່ເຂົ້າໄປໃນບໍລິເວນດັ່ງກ່າວ. | ໜ່ວຍງານທີ່ສີດຢາປາບສັດຕູພືດ |

| | | | | | | |
|---|---|---|---|---|---|---|
| 2 | ຕັດຫຍ້າ, ກິ່ງງ່າປົ່ງໃໝ່ ດ້ວຍເຄື່ອງຕັດຫ້ຍາຟາຍໃສ່ ບ່າ | ເຄື່ອງຕັດຫຍ້າສາມາດເຮັດໃຫ້ ຜູ້ອອກແຮງງານບາດເຈັບ | ຜູ້ອອກແຮງງານຍັງບໍ່ທັນໄດ້ຮັບການຝຶກອົບຮົມໃນການນຳໃຊ້ເຄື່ອງຕັດຫຍ້າຟາຍໃສ່ບ່າ. | ສູງ | - ຝຶກອົບຮົມກ່ຽວກັບຄວາມປອດໄພຂອງແຮງງານແລະວິທີການແກ້ໄຂກັບສະຖານະການທີ່ເກີດຂຶ້ນ.<br>- ສະໜອງອຸປະກອນປ້ອງກັນແຮງງານ ເຊັ່ນ: ແວ່ນຕາ ແລະ ເກີບໂບກທີ່ເຮັດດ້ວຍຢາງພາລາ ໃຫ້ຜູ້ອອກແຮງງານ | ບັນດາໜ່ວຍງານ |
| 3 | ໃສ່ປຸ໋ຍ/ຝຸ່ນ | ກຳມະກອນໃສ່ປຸ໋ຍ/ຝຸ່ນ ອາດຈະ ມີການສຳພັດ ຕໍ່ຜິວໜັງແລະ ເກີດລະຄາຍເຄືອງ. | ກຳມະກອນຍັງບໍ່ທັນໄດ້ຮັບອຸປະກອນປ້ອງກັນ | ຕ່ຳ | - ສະໜອງຖົງມື ແລະ ຊຸດປ້ອງກັນໃຫ້ຜູ້ອອກແຮງງານ<br>- ຝຶກອົບຮົມກ່ຽວກັບເຕັກນິກການໃສ່ປຸ໋ຍ/ຝຸ່ນ ແລະຄວາມປອດໄພໃຫ້ແກ່ຜູ້ອອກແຮງງານ | ບັນດາໜ່ວຍງານ |
| 4 | ທາຢາກະຕຸ້ນ, ຢາ ປ້ອງກັນພະຍາດໜ້າກົດ Rinhmyn 720WP | ໃນລະຫວ່າງການທາຢາ, ຜູ້ອອກແຮງງານອາດຈະໄດ້ຮັບຜົນກະທົບ ເມື່ອຢາສຳພັດກັບຜິວໜັງ, ຕົກໃສ່ຕາ, ຫຼືລະບົບຫາຍໃຈ. | ຜູ້ອອກແຮງງານຍັງບໍ່ໄດ້ຮັບການຝຶກອົບຮົມດ້ານຄວາມປອດໄພແຮງງານ. | ສູງ | - ຈັດຕັ້ງການຝຶກອົບຮົມຄວາມປອດໄພແຮງງານ ກ່ອນທີ່ຈະທາຢາກະຕຸ້ນ, ຢາປ້ອງກັນພະຍາດນ້ຳກົດ, Rinhmyn 720WP.<br>- ສະໜອງອຸປະກອນປ້ອງກັນແຮງງານ ເຊັ່ນ: ຖົງມື ແລະ ຜ້າອັດປາກໃຫ້ຜູ້ອອກແຮງງານ ນຳໃຊ້.<br>- ຖ້າຢາຖືກຕົນຕົວແມ່ນຕ້ອງ ລ້າງອອກທັນທີດ້ວຍນ້ຳສະອາດຫຼາຍໆຄັ້ງແລະນຳສົ່ງໂຮງໝໍເພື່ອປິ່ນປົວ. | ຫົວໜ້າຈຸຜະລິດ |
| **II** | ຊຸດຄົ້ນຢາງ | | | | | |

| | | | | | | |
|---|---|---|---|---|---|---|
| 1 | ມີກິດຢາງທີ່ແຫຼມຄົມ | ໃນລະຫວ່າງການກີດຢາງ, ມີດກີດຢາງ ສາມາດເຮັດໃຫ້ຜູ້ອອກແຮງງານເກີດບາດເຈັບ. | ມີດກີດບໍ່ໄດ້ເອົາແຜພັນໄວ້ເພື່ອປ້ອງກັນ. | ທຳມະດາ | - ແນະນຳໃຫ້ຜູ້ອອກແຮງງານເອົາແຜພັນມີດໄວ້ໃນເວລາທີ່ບໍ່ໄດ້ນຳໃຊ້.<br>- ຝຶກອົບຮົມກ່ຽວກັບຄວາມປອດໄພແຮງງານ ແລະຫົວຫນ້າ ຈຸ ຕ້ອງເອົາຖົງຢາໄປນຳເພື່ອແກ້ໄຂໃນເມືອເກີດອຸບັດຕິເຫດ | ຫົວໜ້າຈຸຜະລິດ |
| 2 | ຢາງຕົກເຂົ້າຕາ | ນ້ຳຢາງຕົກເຂົ້າຕາ | ການກີດປາກກີດຂ້ວາມ (ຂີດໜ້າຫຸ້ງ), ຢາງອາດຈະຕົກໃສ່ຕາ | ຕ່ຳ | - ຫົວຫນ້າຈຸມີການຕັກເຕືອນກຳມະກອນ ຕ້ອງມີສະຕິແລະລະມັດລະວັງໃນເວລາກີດຢາງ, ບໍ່ໃຫ້ນ້ຳຢາງຕົກເຂົ້າຕາ.<br>- ຖ້ານ້ຳຢາງຕົກລົງໃສ່ຕາໃຫ້ລ້າງອອກດ້ວຍນ້ຳສະອາດທັນທີ. | ຫົວໜ້າຈຸຜະລິດ |
| 3 | ກິ່ງງ່າຢາງແຫ້ງ, ຫມາກຢາງແຫ້ງຫຼົ່ນ, ຕົກລົງໃສ່ | ກຳມະກອນອາດຈະຖືກບາດເຈັບຢູ່ຫົວ ຍ້ອນງ່າຢາງແຫ້ງ, ຫມາກຢາງແຫ້ງຫຼົ່ນ, ຕົກລົງໃສ່. | ຍ້ອນລົມແຮງຮັດໃຫ້ກິ່ງງ່າຢາງແຫ້ງຕົກລົງ, ໝາກຢາງແຫ້ງຫຼົ່ນ. | ທຳມະດາ | - ເມື່ອມີລົມແຮງ, ຕ້ອງແຈ້ງໃຫ້ກຳມະກອນທຸກຄົນຢຸດການເຮັດວຽກຢູ່ສວນ.<br>- ສະໜອງໝວກແຂງໃຫ້ກຳມະກອນກີດຢາງ.<br>- ດຳເນີນການປະຖົມພະຍາບານແລະນຳສົ່ງໂຮງຫມໍເພື່ອປິ່ນປົວ. | ອຳນວຍການນິຄົມ, ຫົວໜ້າຈຸຜະລິດ |
| 4 | ສານເຄມີກັນບໍ່ໃຫ້ຢາງກ້າມ | ກຳມະກອນອາດຈະສຳຜັດກັບສານເຄມີກັນບໍ່ໃຫ້ຢາງກ້າມ ເຊັ່ນ amoniac. | ຍ້ອນການລະເຫີຍຂອງ amoniac ໃນລະຫວ່າງຂະບວນການນຳໃຊ້ກັນບໍ່ໃຫ້ຢາງກ້າມ | ຕ່ຳ | - ສະໜອງຜ້າອັດປາກໃຫ້ຫົວໜ້າຈຸ ແລະ ກຳມະກອນ ໃນລະຫວ່າງຂະບວນການນຳໃຊ້ກັນບໍ່ໃຫ້ຢາງກ້າມຢູ່ສວນຢາງ.<br>- ປິດຝາຖັງໃຫ້ແຫນ້ນຫຼັງຈາກ ໃຊ້ສານເຄມີກັນບໍ່ໃຫ້ຢາງກ້າມ ສຳເລັດ. | ຫົວໜ້າຈຸຜະລິດ |

| | | | | | | |
|---|---|---|---|---|---|---|
| 5 | ງູ, ຂີ້ເຂັບ, ແມງເງົາ | ກຳມະກອນອາດຈະຖືກງູ, ຂີ້ເຂັບ, ແມງເງົາ ກັດ (ຕອດ). | - ງູ, ຂີ້ເຂັບສ່ວນຫຼາຍເຄື່ອນໄຫວໃນຕອນກາງຄືນ, ອາດຈະພົບເຫັນເທິງເສັ້ນທາງທີ່ກຳມະກອນໄປກີດຢາງ.<br>- ແມງເງົາ ມັກລີ້ຢູ່ໃນຖ້ວຍໂຕ່ງນ້ຳຢາງ. | ທຳມະດາ | - ສະໜອງຢາປົວແມງເງົາຕອດໃຫ້ຫົວໜ້າຈຸຜະລິດເອົານຳໄປໃນເວລາກີດຢາງ.<br>- ຝຶກອົບຮົມກ່ຽວກັບຄວາມປອດໄພແຮງງານ ແລະປະຖົມພະຍາບານໃນກໍລະນີງູກັດ.<br>- ນຳສົ່ງໂຮງໝໍເພື່ອປິ່ນປົວໃຫ້ທັນເວລາ. | ຫົວໜ້າຈຸຜະລິດ |
| 6 | ເຄື່ອນຍ້າຍ/ໄປມາໃນສວນ | ອຸບັດຕິເຫດໃນເວລາໄປມາ, ຂົນສົ່ງຢາງໃນສວນ | ຍ້ອນເສັ້ນທາງໃນລະດູຝົນມັກຈະມື່ນ, ທາງເປັນຂຸມ | ທຳມະດາ | - ບໍລິສັດ ສ້ອມແປງເສັ້ນທາງຂົນສົ່ງຢາງເປັນປົກກະຕິ.<br>- ຕັກເຕືອນຜູ້ອອກແຮງໃນເວລາສັນຈອນຕ້ອງມີສະຕິຮັບປະກັນຄວາມປອດໄພ.<br>- ໃນກໍລະນີເກີດອຸປະຕິເຫດ, ຫົວໜ້າຈຸປະຖົມພະຍາບານແລະນຳຜູ້ບາດເຈັບໄປໂຮງໝໍເພື່ອປິ່ນປົວ. | ບັນດາໜ່ວຍງານ |
| 7 | ຟ້າຜ່າ | - ຟ້າຜ່າໃສ່ຄົນໃນເວລາກີດຢາງ.<br>- ພົນກະທົບທາງອ້ອມເມື່ອຟ້າຜ່າໃສ່ຕົ້ນຢາງພາລາ, ເສົາໄຟຟ້າ, ໄຟໄໝ້ສາງ | ເມື່ອມີກະແສໄຟຟ້າລະຫວ່າງຟ້າເຫຼື້ອມ, ຟ້າຮ້ອງກັບໜ້າດິນ | ສູງ | - ຕິດຕັ້ງເສົາປ້ອງກັນຟ້າຜ່າຢູ່ກຸ່ມຈຸຜະລິດຂອງນິຄົມ.<br>- ແນະນຳປະຊາຊົນບໍ່ໃຫ້ເຂົ້າໄປໃນສວນຢາງພາລາໃນເວລາທີ່ມີຟ້າເຫຼື້ອມ, ຟ້າຮ້ອງ ແລະບໍ່ໃຫ້ຢືນກ້ອງຕົ້ນໄມ້ສູງ. | ບັນດາໜ່ວຍງານ |
| **III** | **ຂຸດຄົ້ນໄມ້** | | | | | |
| 1 | ເຕັກນິກການຂຸດຄົ້ນໄມ້ (ເປີດປາກ, ຕັດ, ໄມ້ຄ້ຳ ... ) | ການຕັດຕົ້ນໄມ້ສາມາດເຮັດໃຫ້ຜູ້ອອກແຮງງານຖືກບາດເຈັບ (ຜູ້ໃຊ້ຈັກສະຕິງ, ຜູ້ຊ່ວຍ) | ຜູ້ອອກແຮງງານຍັງບໍ່ທັນໄດ້ຮັບການຝຶກອົບຮົມເຕັກນິກການຕັດໄມ້ | ສູງ | - ຝຶກອົບຮົມເຕັກນິກການຂຸດຄົ້ນໄມ້ຄື: ການເປີດປາກ, ຕັດ, ເລືອກທິດໃຫ້ຕົ້ນໄມ້ລົ້ມ, ໄມ້ຄ້ຳ....<br>- ສະໜອງອຸປະກອນປ້ອງກັນແຮງງານຕາມລະບຽບການ.<br>- ບໍ່ຕັດຕົ້ນໄມ້ໃນເວລາຝົນຕົກ | ຜູ້ຮັບເໝົາ, ບັນດາໜ່ວຍງານ |

| | | | | | | |
|---|---|---|---|---|---|---|
| 2 | ນຳໃຊ້ຈັກສະຕິງ | ຈັກສະຕິງ ສາມາດເຮັດໃຫ້ເກີດບາດເຈັບຕໍ່ຜູ້ອອກແຮງງານ. | ຜູ້ອອກແຮງງານຍັງບໍ່ທັນໄດ້ຮັບການຝຶກອົບຮົມການນຳໃຊ້ຈັກສະຕິງ, ຍັງບໍ່ທັນໄດ້ຮັບການສະໜອງຊຸດປ້ອງກັນແຮງງານ | ສູງ | - ຜູ້ຕັດຕົ້ນໄມ້ຕ້ອງໄດ້ຮັບການຝຶກອົບຮົມການນຳໃຊ້ ຈັກສະຕິງ.<br>- ສະໜອງອຸປະກອນປ້ອງກັນແຮງງານຕາມລະບຽບການ. | ຜູ້ຮັບເໝົາ, ບັນດາໜ່ວຍງານ |
| 3 | ຂອບເຂດຊຸດຄົ້ນໄມ້ | ຂອບເຂດຊຸດຄົ້ນໄມ້ບໍ່ມີປ້າຍເຕືອນ | ໜ່ວຍງານຕັດຕົ້ນໄມ້ບໍ່ໄດ້ຕັ້ງປ້າຍເຕືອນ ໃນເຂດທີ່ກຳລັງຕັດຕົ້ນໄມ້. | ສູງ | ຕັ້ງປ້າຍເຕືອນໃນຂອບເຂດກຳລັງຊຸດຄົ້ນໄມ້ ເພື່ອບໍ່ໃຫ້ຄົນເຂົ້າໃນເຂດດັ່ງກ່າວ. | ຜູ້ຮັບເໝົາ, ບັນດາໜ່ວຍງານ |
| 4 | ຂົນໄມ້ອອກ | ໄມ້ອາດຈະຕົກລົງຈາກລົດບັນທຸກໃນລະຫວ່າງການຂົນສົ່ງ. | ໃນຂະບວນການຂົນໄມ້ຂຶ້ນລົດ, ມັດເຊືອກບໍ່ແໜ້ນ | ສູງ | ຈັດພະນັກງານກວດກາຂະບວນການຂົນໄມ້ຂຶ້ນລົດ ແລະມັດເຊືອກໃຫ້ແໜ້ນກ່ອນລົດຈະອອກເດີນທາງ. | ຜູ້ຮັບເໝົາ, ບັນດາໜ່ວຍງານ |

*ວັນທີ 30 ກັນຍາ 2025*

**ຫ້ອງເຕັກນິກຜະລິດ**

**ຝ້າມວັນນາມ**

**ຄະນະ FSC ບໍລິສັດ**

**ດັ້ງດິ່ງຟຸ່ງ**